ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມປ່າໄມ້

3278
ເລກທີ:................./ກປມ
ນະຄອນຫລວງວຽງຈັນ, ວັນທີ:..12 JUL 2023

# ໜັງສືແຈ້ງເຊີນປະມູນ

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບທຶນກູ້ຢືມຈາກທະນາຄານໂລກ ສຳລັບ ການຈັດຕັ້ງປະຕິບັດ ໂຄງການ ພູມິທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ ເຊິ່ງທາງ ໂຄງການໄດ້ຮັບອະນຸມັດງົບປະມານ ແລະ ມີຈຸດປະສົງນຳໃຊ້ ງົບປະມານດັ່ງກ່າວເຂົ້າໃນ ການກໍ່ສ້າງຫ້ອງປະຊຸມສູນຝຶກອົບຮົມປ່າໄມ້ ຫ້ວຍປາມ້ອມ, ເມືອງວັງວຽງ, ແຂວງວຽງຈັນ.
2. ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດເຊີນ ບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມເຂົ້າຍື່ນ ຊອງປະມູນ ສຳລັບ ການກໍ່ສ້າງຫ້ອງປະຊຸມສູນຝຶກອົບຮົມປ່າໄມ້ ຫ້ວຍປາມ້ອມ, ເມືອງວັງວຽງ, ແຂວງວຽງຈັນ.
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ລະບຸໄວ້ໃນ ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້ - ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017, ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄູ່ມືແນະນຳ: ຂອງທະນາຄານໂລກ ວ່າດ້ວຍຫລັກການ ການຈັດຊື້ - ຈັດຈ້າງ ສຳລັບ ປະເທດຜູ້ກູ້ຢືມ (Procurement Regulations for IPF Borrowers), ສະບັບເດືອນ ກໍລະກົດ 2016 ("ຄູ່ມືການຈັດຊື້ - ຈັດຈ້າງ"), ແລະ ເປີດໃຫ້ຜູ້ປະມູນທຸກໆຄົນຕາມທີ່ໄດ້ລະບຸໄວ້ໃນປຶ້ມຄູ່ມືຈັດຊື້-ຈັດຈ້າງ. ພ້ອມກັນນັ້ນ, ໃຫ້ເບິ່ງຂໍ້ແນະນຳສຳລັບຜູ້ປະມູນ ຂໍ້ ITB 4.3 ທີ່ກຳນົດໄວ້ໃນນະໂຍບາຍຂອງທະນາຄານໂລກວ່າດ້ວຍການມີຜົນປະໂຫຍດຊໍ້າຊ້ອນ.
4. ບໍລິສັດທີ່ມີຄວາມເໝາະສົມອາດຈະຂໍຂໍ້ມູນຈາກ ໂຄງການພູມິທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ, ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ທ່ານສາມາດຂໍ ແລະ ກວດກາເອກະສານປະມູນໃນເວລາໂມງລັດຖະການ 08:00 ຫາ16 :00 ໂມງ ຕາມທີ່ຢູ່ຂ້າງລຸ່ມນີ້.
5. ບໍລິສັດທີ່ມີຄວາມເໝາະສົມ ແລະ ມີຄວາມສົນໃຈ ສາມາດຊື້ເອກະສານປະມູນຄົບຊຸດ ສະບັບພາສາລາວ ໂດຍຍື່ນໜັງສືຫາທີ່ຢູ່ຂ້າງລຸ່ມນີ້ ແລະ ຈ່າຍເງິນທີ່ຈະບໍ່ສົ່ງຄືນຈຳນວນ **300.000 (ສາມແສນ) ກີບ** ວິທີຊຳລະ ຕ້ອງຈ່າຍເປັນເງິນສົດ ເອກະສານປະມູນ ຈະສົ່ງໃຫ້ດ້ວຍອີເມວ.
6. ຊອງປະມູນຈະຕ້ອງສົ່ງຫາບ່ອນຢູ່ຂ້າງລຸ່ມນີ້ ກ່ອນເວລາ 9:00 ໂມງ, ວັນທີ 15 ສິງຫາ 2023 ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ເອກະສານປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ຊອງປະມູນຈະເປີດໃນເວລາ 9:00 ໂມງ ຂອງມື້ດຽວກັນ ການປະມູນຈະເປີດຕໍ່ສາທາລະນະ ໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈເຂົ້າຮ່ວມຢູ່ສະຖານທີ່ໆກຳນົດໄວ້ຂ້າງລຸ່ມນີ້.
7. ທຸກໆເອກະສານປະມູນຈະຕ້ອງປະກອບແຈ້ງການຄໍ້າປະກັນການປະມູນດ້ວຍກຽດ.
8. ທ່ານສາມາດຕິດຕໍ່ພົວພັນ ແລະ ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ ໂຄງການພູມິທັດແລະຊີວິດການເປັນຢູ່ ໃນສປປ ລາວ, ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້, ບ້ານສີສະເກດ, ຄຸ້ມທາດດຳ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ. ຕິດຕໍ່ພົວພັນ ທ່ານ ລັດຕະນະ ທຳມະວົງສາ ຜູ້ປະສານງານໂຄງການ ໄດ້ທີ່ ໂທລະສັບ: (+856) 21 215002 ອີເມວ: latthamlong09@gmail.com.

**ຫົວໜ້າກົມ**

ບຸນປອນ ແສງທອງ